# ບົດລາຍງານປະຈຳປີ 2025



## ອົງການ ມະນຸດສະທຳເພື່ອຄົນສູ່ຄົນ






Tuberculosis is a curable disease
Bệnh lao là bệnh có thể điều trị khỏi.











## ສາລາບານ:


ໂຄງການຂອງພວກເຮົາ. 5

ຂົງເຂດວຽກງານ. 6

ກ່ຽວກັບພວກເຮົາ ແລະ ສິ່ງທີ່ພວກເຮົາເຮັດ. 7

ສິ່ງແວດລ້ອມ ແລະ ກະສິກຳແບບຍືນຍົງ. 9

ໂຄງການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການຂອງກຸ່ມຊາວກະສິກອນ. 11

ການປົກປັກຮັກສາຊີວະນາໆພັນ ແລະ ປ່າໄມ້. 12

ວຽກງານສາທາລະນະສຸກ ແລະ ການປ້ອງກັນພະຍາດ. 18

ການຊອກຫາຄົນເປັນພະຍາດອັມມະໂລກ. 19

ການພັດທະນາຊຸມຊົນ. 23

ສຸຂະພາບແມ່ ແລະ ເດັກ ແລະ ໂພສະນາການ. 25

ກຸ່ມພັດທະນາເດັກທີ່ນຳພາໂດຍຊຸມຊົນ. 26

ພາບລວມທາງດ້ານການເງິນ. 27

ອົງການມະນຸດສະທຳເພື່ອຄົນສູ່ຄົນທົ່ວໂລກ. 27

ສະຫະພັນມະນຸດສະທຳເພື່ອຄົນສູ່ຄົນ. 28




# ໂຄງການຂອງພວກເຮົາ




- ການສະໜັບສະໜູນໂດຍຊຸມຊົນເພື່ອຍຸດທະສາດ ການຢຸດຕິວັນນະໂລກໃນແຂວງສະຫວັນນະເຂດ
- ໂຄງການຈັດຕັ້ງກຸ່ມຊາວກະສິກອນຢູ່ເມືອງໄຊບົວທອງ
- ໂຄງການຊຸມຊົນລາວແກ້ໄຂບັນຫາຄວາມທຸກຍາກ ແລະ ການສູນເສຍຄວາມຫຼາກຫຼາຍທາງຊີວະພາບ ເພື່ອການພັດທະນາແບບຍືນຍົງ.
- ໂຄງການຈັດຕັ້ງກຸ່ມຊາວກະສິກອນສໍາລັບແມ່ຍິງ ອົບພະຍົບ ແລະ ແມ່ຍິງຊົນເຜົ່າ.
- ໂຄງການເປົ້າໝາຍສີຂຽວ: ກິລາບານເຕະເພື່ອຄວາມ ຮັບຮູ້ດ້ານສິ່ງແວດລ້ອມໃນລາວ.
- ສະໂມສອນຊາວກະສິກອນສໍາລັບແມ່ຍິງອົບພະຍົບ ແລະ ຊົນເຜົ່າຜ່ານການຄ້າ
- ການພັດທະນາເດັກທີ່ນໍາພາໂດຍຊຸມຊົນ ໃນບ້ານນາພ້າວ
- ສະໂມສອນຊາວກະສິກອນເພື່ອສຸຂະພາບ ແລະ ການ ດໍາລົງຊີວິດ



**19 ຫົວໜ່ວຍ ໂຄງການໃນ 220 ບ້ານ, 33 ເມືອງ ແລະ 4 ແຂວງ ນັບຕັ້ງແຕ່ປີ 2011**



**ພະນັກງານ 48 ຄົນ**



**ເຂົ້າເຖິງປະຊາຊົນ ຫຼາຍກວ່າ 350,00**

# ຂົງເຂດວຽກງານ



### ວຽກງານການພັດທະນາຊຸມຊົນ

- ສ້າງກຸ່ມປະຕິບັດງານຂອງໝູ່ບ້ານ ແລະ ສ້າງຂີດຄວາມສາມາດໃນການສ້າງລາຍໄດ້, ຄວາມໝັ້ນຄົງດ້ານສະບຽງອາຫານ, ການດູແລເດັກ, ສຸຂະພາບ, ແລະ ການປ່ຽນແປງຂອງດິນຟ້າອາກາດ.
- ການຝຶກອົບຮົມທັກສະຂອງແມ່ຍິງ ແລະ ໄວໜຸ່ມ ໃນການຮູ້ໜັງສື ແລະ ທັກສະການເປັນຜູ້ປະກອບການ.
- ສູນດູແລເດັກ ແລະ ສະໂມສອນຊາວໜຸ່ມ.
- ໂຄສະນາເພື່ອດູແລສິ່ງແວດລ້ອມ.



### ວຽກງານສິ່ງແວດລ້ອມ ແລະ ກະສິກຳແບບຍືນຍົງ

- ພັດທະນາຄວາມສາມາດຂອງຊາວກະສິກອນຂະໜາດນ້ອຍ ເພື່ອເພີ່ມທະວີການຜະລິດກະສິກຳ ແລະ ການເຊື່ອມກັບຕໍ່ຕະຫຼາດ.
- ຊ່ວຍເຫຼືອຊາວກະສິກອນຂະໜາດນ້ອຍໃຫ້ທົນທານ ແລະ ສາມາດປັບຕົວເຂົ້າກັບໄພພິບັດ ແລະ ອັນຕະລາຍຈາກດິນຟ້າອາກາດ.
- ຈັດຕັ້ງຊາວກະສິກອນຂະໜາດນ້ອຍເພື່ອແລກປ່ຽນຄວາມຮູ້ດ້ານການປູກຝັງ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນໄດ້ໃນຊຸມຊົນ.



### ວຽກງານສາທາລະນະສຸກ ແລະ ການປ້ອງກັນພະຍາດ

- ການຊອກຫາ ແລະ ໃຫ້ການຊ່ວຍເຫຼືອກໍລະນີຜູ້ເປັນພະຍາດວັນນະໂລກຢູ່ໃນຊຸມຊົນ.
- ການໃຫ້ຄວາມຮູ້ກ່ຽວກັບໂລກ HIV, ການດູແລ ແລະ ການຊ່ວຍເຫຼືອ
- ສະໜັບສະໜູນດ້ານໂພຊະນາການ
- ສະໜັບສະໜູນສຸຂະພາບແມ່ ແລະ ການດູແລເດັກ.

# ອົງການມະນຸດສະທຳເພື່ອຄົນສູ່ຄົນປະຈຳລາວ

## ພວກເຮົາແມ່ນໃຜ

ອົງການມະນຸດສະທຳເພື່ອຄົນສູ່ຄົນແມ່ນອົງການຈັດຕັ້ງສາກົນທີ່ບໍ່ໄດ້ສັງກັດລັດ ມີຫ້ອງການຜູ້ຕາງໜ້າຢູ່ໃນ ສປປ ລາວ.
ອົງການມະນຸດສະທຳເພື່ອຄົນສູ່ຄົນແມ່ນສະຫະພັນສາກົນທີ່ເຮັດວຽກຢູ່ໃນ 49 ປະເທດທົ່ວໂລກ ຍ້ອນກັບຄືນໄປໃນປີ 1977 ທີ່ໄດ້ດຳເນີນໂຄງການທຳອິດໃນປະເທດຊິມບັບເວ ແລະ ໂມຊຳບິກ.

ອົງການມະນຸດສະທຳເພື່ອຄົນສູ່ຄົນປະຈຳລາວມຸ່ງໝັ້ນຮ່ວມກັບຄົນທຸກຍາກໃນຂະບວນການລວມທີ່ສະໜັບສະໜູນປະຊາຊົນໃຫ້ມີການປ່ຽນແປງ, ປັບປຸງຊີວິດການເປັນຢູ່ ແລະ ແກ້ໄຂບັນຫາຂອງເຂົາເຈົ້າ.
ພວກເຮົາເຊື່ອໝັ້ນວ່າຄວາມທຸກຍາກສາມາດຜ່ານຜ່າໄດ້ໂດຍການປະສານສົມທົບ, ຊຸມຊົນໄດ້ປັບປຸງຊີວິດການເປັນຢູ່, ກະສິກຳແບບຍືນຍົງ, ສາທາລະນະສຸກ ແລະ ປ້ອງກັນພະຍາດ, ການຜະລິດ ແລະ ລາຍໄດ້ເພີ່ມຂຶ້ນ, ການສຶກສາ, ການສ້າງຄວາມເຂັ້ມແຂງຂອງແມ່ຍິງ ແລະ ການປົກປ້ອງສິ່ງແວດລ້ອມ.

ດ້ວຍພື້ນຖານຂອງການຕໍ່ສູ້ແມ່ນຄົນທຸກຍາກທີ່ມີສ່ວນຮ່ວມໃນການປ່ຽນແປງຊະຕາກຳຂອງຕົນ, ພວກເຮົາຮ່ວມກັບເຂົາເຈົ້າ, ກັບລັດຖະບານ ແລະ ກຳລັງທີ່ກ້າວໜ້າ.
ໃນລະດັບຊາດ ແລະ ສາກົນ ໃນຄວາມພະຍາຍາມລວມ ເພື່ອຫັນປ່ຽນ ແລະ ໃນໄລຍະຍາວ ເພື່ອລົບລ້າງສະພາບການທີ່ມີຢູ່ຂອງຄົນທຸກຍາກ.
ວຽກງານຂອງພວກເຮົາແມ່ນອີງໃສ່ຈັນຍາບັນຂອງມະນຸດສະທຳ.
ພວກເຮົາຍອມຮັບແນວຄວາມຄິດທີ່ວ່າປະຊາຊົນເປັນຈຸດໃຈກາງຂອງການພັດທະນາຂອງຕົນເອງເປັນກຳລັງຂັບເຄື່ອນ, ແລະການປ່ຽນແປງທີ່ຍືນຍົງແມ່ນຖືກສ້າງຂຶ້ນໂດຍຜ່ານຂະບວນການຮ່ວມມື.

ເມື່ອປະຊາຊົນຮ່ວມມືກັນແລະມີສ່ວນຮ່ວມໃນການປະຕິບັດທົ່ວໄປ, ພວກເຂົາຊອກຫາວິທີທີ່ດີກວ່າ.
ເມື່ອປະຊາຊົນເປັນຈຸດໃຈກາງຂອງຂະບວນການຕັດສິນໃຈ ແລະ ການຈັດຕັ້ງປະຕິບັດ ແລະ ການປະເມີນຜົນວຽກງານ, ເຂົາເຈົ້າຈະສ້າງການພັດທະນາໃຫ້ເກີດຂຶ້ນ.

## ພວກເຮົາເຮັດຫຍັງ

ປະຫວັດຄວາມເປັນມາຂອງພວກເຮົາຍ້ອນກັບໄປໃນປີ **2011**, ເມື່ອພວກເຮົາເລີ່ມຈັດຕັ້ງປະຕິບັດໂຄງການພັດທະນາຊຸມຊົນໂດຍສຸມໃສ່ສຸຂະພາບ ແລະ ໂພຊະນາການຂອງແມ່ ແລະ ເດັກ, ການສ້າງລາຍຮັບ ແລະ ການປັບປຸງຊີວິດການເປັນຢູ່ໃນແຂວງບໍລິຄຳໄຊ.

ໃນລະຫວ່າງປີ **2018** ຫາ **2025**, ອົງການ **HPP** ປະຈຳລາວ ໄດ້ຈັດຕັ້ງປະຕິບັດໂຄງການຄົ້ນຫາກໍລະນີວັນນະໂລກທີ່ນຳພາໂດຍຊຸມຊົນໃນແຂວງບໍລິຄຳໄຊ, ອຸດົມໄຊ ແລະ ສະຫວັນນະເຂດ ລວມທັງການສະໜັບສະໜູນການປິ່ນປົວ ແລະ ການດູແລ, ໂດຍຮ່ວມມືກັບ **Global Fund,** ກອງທຶນຊ່ຽວຊານຝລັ່ງ **(Expertise France L'Initiative)** ແລະ ສູນວັນນະໂລກແຫ່ງຊາດ.

ດ້ວຍທຶນສະໜັບສະໜູນຈາກ**ສະຫະພາບເອີຣົບ(EU)**, ພວກເຮົາໄດ້ເລີ່ມຕົ້ນໂຄງການສະໂມສອນຊາວກະສິກອນໃນແຂວງຄຳມ່ວນໃນປີ **2017**, ເຊິ່ງສາມາດເຂົ້າເຖິງຊາວກະສິກອນໄດ້ 5,000 ຄົນ. ມາຮອດປີ **2021**, ໂຄງການດັ່ງກ່າວໄດ້ສຸມໃສ່ການປັບປຸງໂພຊະນາການ ແລະ ຄວາມໝັ້ນຄົງດ້ານອາຫານໃນຄອບຄົວເປັນພິເສດ.

ແຕ່ປີ **2021** ຫາ **2025**, ພວກເຮົາໄດ້ສືບຕໍ່ເຮັດວຽກຮ່ວມກັບຊາວກະສິກອນ 3,400 ຄົນ ໂດຍຮ່ວມມືກັບຜູ້ໃຫ້ທຶນໃໝ່ຄື: **ທະນາຄານພັດທະນາອາຊີ, ກອງທຶນ L'Oreal ສຳລັບແມ່ຍິງ, ສະຖານທູດນິວຊີແລນ, ໂຄງການເບຍ Heineken** ແລະ **ກອງທຶນພິທັກສິ່ງ ແວດລ້ອມ ແລະ ຊີວະນາໆພັນ (Darwin Initiative/ ລັດຖະບານອັງກິດ).** ໃນປີ **2024-25**, ພວກເຮົາໄດ້ຈັດຕັ້ງປະຕິບັດໂຄງການຈຳນວນໜຶ່ງທີ່ສຸມໃສ່ການປູກປ່າຄືນໃໝ່ ແລະ ການປົກປ້ອງຄວາມຫຼາກຫຼາຍທາງຊີວະພາບ.

ຫຼັງຈາກປະສົບຜົນສຳເລັດໃນການຈັດຕັ້ງປະຕິບັດກຸ່ມດູແລເດັກທີ່ບໍ່ເປັນທາງການທີ່ນຳພາໂດຍຊຸມຊົນຈຳນວນໜຶ່ງ ເພື່ອສະໜັບສະໜູນການມີສ່ວນຮ່ວມຢ່າງຫ້າວຫັນຂອງແມ່ຍິງໃນການສ້າງລາຍຮັບ ແລະ ປັບປຸງຊີວິດການເປັນຢູ່ຂອງຄອບຄົວຂອງເຂົາເຈົ້າ, ພວກເຮົາໄດ້ເລີ່ມຕົ້ນໂຄງການ 3 ປີໃນປີ 2025, ໂດຍທົດລອງໃຊ້ສູນພັດທະນາເດັກໃນໄວເດັກໃນເມືອງໄຊພູທອງ, ໂດຍໄດ້ຮັບທຶນສະໜັບສະໜູນຈາກ**ມູນນິທິຄວາມຝັນເດັກນ້ອຍ(Child's Dream Fuondation).**





**ເມື່ອປະຊາຊົນມີຄວາມສາມະຄີກັນ ແລະ ປະກອບສ່ວນເວລາ, ວຽກງານ ແລະ ຈຳນວນເງິນພຽງເລັກນ້ອຍຮ່ວມກັນ ເຂົາເຈົ້າກໍ່ສາມາດທີ່ຈະເຄື່ອນຍ້າຍພູເຂົາອອກໄດ້.**
ດ້ວຍກຸ່ມຊາວກະສິກອນທີ່ເປັນກະດູກສັນຫຼັງຂອງຊາດ ແລະ ຮ່ວມມືກັນເພື່ອປັບປຸງຊີວິດຂອງຕົນໃຫ້ດີຂຶ້ນ.

**ພວກເຮົາຮ່ວມມືກັບປະຊາຊົນ ແລະ ລັດຖະບານ ເພື່ອປ້ອງກັນ ແລະ ສະກັດກັ້ນພະຍາດຕິດແປດ**
ຜົນໄດ້ຮັບດ້ານບວກທີ່ຈະໄດ້ຮັບນັ້ນແມ່ນຂຶ້ນຢູ່ກັບປະຊາຊົນເອງທີ່ເປັນກຳລັງແຮງໃນການຂັບເຂື່ອນ






**ໂຄງການຂອງພວກເຮົາຮຽກຮ້ອງໃຫ້ຊຸມຊົນມີສ່ວນຮ່ວມເຂົ້າໃນການພັດ ທະນາຊຸມຊົນຂອງຕົນເອງ**
ການສ້າງລາຍໄດ້ຈາກການຂາຍ ແລະ ຈຳໜ່າຍສິນຄ້າໃນທ້ອງຕະຫຼາດແມ່ນການຂັບເຄື່ອນທີ່ສຳຄັນຂອງການພັດທະນາເສດຖະກິດ.



# ສິ່ງແວດລ້ອມ ແລະ ກະສິກຳແບບຍືນຍົງ

**ຊາວກະສິກອນຄືຫົວໃຈສຳຄັນ - ການປະຕິບັດທີ່ຍືນຍົງສາມາດຢຸດຕິການຕັດໄມ້ທຳລາຍປ່າໄດ້.
ດ້ວຍການສະໜັບສະໜູນທີ່ຖືກຕ້ອງ - ການຝຶກອົບຮົມ, ການເງິນ, ແລະນະໂຍບາຍ - ຊາວກະສິກອນສາມາດເພີ່ມຜົນຜະລິດໂດຍບໍ່ຕ້ອງຂະຫຍາຍໄປສູ່ປ່າໄມ້, ປົກປ້ອງທັງທຳມະຊາດແລະອະນາຄົດຂອງເຂົາເຈົ້າ.**



ຊາວກະສິກອນຂະໜາດນ້ອຍແມ່ນຢູ່ແຖວໜ້າໃນການຕອບໂຕ້ກັບວິກິດການທາງດ້ານສິ່ງແວດລ້ອມ ແລະ ສັງຄົມຂອງໂລກ ເຫັນໄດ້ວ່າ ເຂົາເຈົ້າມີຄວາມສຳຄັນຫຼາຍເທົ່າໃດ. ເມື່ອເງື່ອນໄຂເອື້ອອຳນວຍໃຫ້ເຂົາເຈົ້າສາມາດຫາລ້ຽງຊີບຕົນເອງໄດ້, ເຂົາເຈົ້າກໍຈະຢູ່ໃນພື້ນທີ່ດິນຂອງຕົນເອງ ແລະ ປົກປັກຮັກສາມັນໄວ້. ທີ່ດິນເປັນພື້ນຖານສຳລັບການປະກອບອາຊີບທຳມາຫາກິນ ແລະ ວັດທະນະທຳຂອງເຂົາເຈົ້າ



# ໂຄງການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການຂອງກຸ່ມຊາວກະສິກອນ

### ກຸ່ມຊາວກະສິກອນປັບປຸງການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການທີ່ສາມາດຕ້ານທານກັບສະພາບອາກາດ

ອົງການມະນຸດສະທຳເພື່ອຄົນສູ່ຄົນ (HPP) ແລະ ອົງການສົ່ງເສີມສຸຂະພາບ ແລະ ປ້ອງກັນຄວາມທຸກຍາກ(HPA) ຮ່ວມມືຢ່າງໃກ້ຊິດກັບແຂວງຄໍາມ່ວນ ເພື່ອປະຕິບັດໂຄງການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການບັນລຸໄດ້ເຖິງ 5,000 ຄອບຄົວຊາວກະສິກອນ ໃນທົ່ວ 100 ບ້ານຂອງແຂວງຄໍາມ່ວນ ນັບຕັ້ງແຕ່ປີ 2021.
**ສະຫະພາບເອີ ຣົບ** ເປັນຄູ່ຮ່ວມງານການສະໜອງທຶນຕົ້ນຕໍ ແລະ ການປະກອບສ່ວນເພີ່ມເຕີມຈາກຜູ້ໃຫ້ທຶນອື່ນໆ, ຊ່ວຍຂະຫຍາຍໂຄງການຈັດຕັ້ງກຸ່ມຊາວກະສິກອນຈົນກ່ວາທ້າຍປີ 2024 ດ້ວຍທຶນເພີ່ມເຕີມຈາກຄູ່ຮ່ວມງານຂະໜາດນ້ອຍ ແລະ ຂະໜາດໃຫຍ່. ກຸ່ມຊາວກະສິກອນເປັນໂຄງສ້າງພື້ນຖານໃນການຈັດຕັ້ງປະຕິບັດກິດຈະກໍາຕ່າງໆຂອງໂຄງການ. ຈຸດປະສົງລວມຂອງກຸ່ມຊາວກະສິກອນແມ່ນເພື່ອເພີ່ມທະວີການຜະລິດກະສິກໍາ ແບບຍືນຍົງ ແລະ ສາມາດທົນທານຕໍ່ດິນຟ້າອາກາດ, ປັບປຸງໂພຊະນາການຂອງຄອບຄົວດ້ວຍການກິນອາຫານທີ່ຄົບໝູ່, ຍົກລະດັບຄວາມຮັ່ງມີຂອງຊາວກະສິກອນ ແລະ ສ້າງຜົນຜະລິດໃຫ້ມີເຫຼືອໄວ້ເພື່ອຂາຍ.
ໃນກຸ່ມຂອງເຂົາເຈົ້າ, ຊາວກະສິກອນຈະຮຽນຮູ້ວິທີການເພີ່ມຜົນຜະລິດ, ປູກພືດຫຼາຍຊະນິດ, ເຮັດວຽກຮ່ວມກັນຢ່າງມີປະສິດ ທິພາບ, ຕໍ່ລອງລາຄາກັນເປັນກຸ່ມ ແລະ ຊ່ວຍເຫຼືອເຊິ່ງກັນ ແລະກັນ. ເຂົາເຈົ້າຈະປະຊຸມກັນສອງຄັ້ງຕໍ່ອາທິດເພື່ອປຶກສາຫາລືຄວາມຄືບຫນ້າ, ບັນຫາຕ່າງໆ ແລະ ໄດ້ຮັບການຝຶກອົບຮົມ.
ຜ່ານການຮ່ວມມືກັນຢ່າງໃກ້ຊິດ ແລະ ການຮຽນຮູ້ສິ່ງໃໝ່, ຊາວກະສິກອນມີຄວາມຄືບໜ້າຢ່າງໃຫຍ່ຫຼວງ.
ເປົ້າໝາຍຂອງກຸ່ມຊາວກະສິກອນແມ່ນເພື່ອກ້າວໄປສູ່ການກຸ້ມຕົນເອງໃນເຄືອຂ່າຍຂອງເຂົາເຈົ້າທີ່ມີການຊ່ວຍເຫຼືອເຊິ່ງກັນ ແລະ ຊຶ່ງສາມາດສືບຕໍ່ດ້ວຍຕົນເອງຫຼັງຈາກທີ່ໂຄງການສິ້ນສຸດລົງ
ບັນດາກຸ່ມຊາວກະສິກອນຍັງຄົງສືບຕໍ່ຮ່ວມມືກັນພາຍຫຼັງທີ່ການໃຫ້ສະໜອງທຶນສິ້ນສຸດລົງ. ຊາວກະສິກອນຈໍານວນຫຼາຍຍັງໄດ້ສືບຕໍ່ນໍາໃຊ້ສວນສາທິດລວມຂອງບ້ານເພື່ອສ້າງລາຍຮັບຮ່ວມກັນ ແລະ ສືບຕໍ່ກິດຈະກໍາອື່ນໆຂອງກຸ່ມເພື່ອເພີ່ມການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການໃນຫຼາຍຄອບຄົວໃຫ້ສູງຂຶ້ນກວ່າເກົ່າ.




**ຊາວກະສິກອນຂະໜາດນ້ອຍສາມາດມີບົດບາດສໍາຄັນໃນການສ້າງລະບົບອາຫານທີ່ຍືນຍົງໃນທ້ອງຖິ່ນ, ຕໍ່ສູ້ກັບຄວາມອຶດຫິວ ແລະ ພາວະການຂາດສານອາຫານໃນຊຸມຊົນຂອງຕົນເອງ.**

**ກິດຈະກໍາຫຼັກປະກອບມີ:**

- ຈັດຕັ້ງແປງສາທິດເພື່ອປູກ ແລະ ຜະລິດພືດຜັກຕ່າງໆ (1 ແປງຕໍ່ກຸ່ມ)
- ຝຶກອົບຮົມກ່ຽວກັບການເຮັດກະສິກໍາທີ່ທົນທານຕໍ່ສະພາບອາກາດ ແລະ ຫຼັກການຜະລິດກະສິກໍາແບບຍືນຍົງອື່ນໆ
- ການຈັດຕັ້ງທະນາຄານແນວພັນພືດ
- ການນໍາໃຊ້ລະບົບນໍ້າຂະໜາດນ້ອຍສໍາລັບການຊົນລະປະທານ
- ສ້າງຕັ້ງເຮືອນຮົ່ມສໍາລັບການປູກພືດຜັກລະດູຝົນ
- ສ້າງໜອງປາ
- ຝຶກອົບຮົມການລ້ຽງສັດ ແລະ ສ້າງຕັ້ງລະບົບກອງທຶນສົ່ງຕໍ່ສັດລ້ຽງ
- ການແນະນໍານະວັດຕະກໍາເຕັກນິກອັນໃໝ່ໃນການແປຮູບອາຫານ, ການກະກຽມ ແລະ ການເກັບຮັກ
- ເພີ່ມຕ່ອງໂສ້ມູນຄ່າ ແລະ ການເຂົ້າເຖິງຕະຫຼາດໃຫ້ສູງຂຶ້ນ
- ສາມາດຕໍ່ລອງຮ່ວມກັນເພື່ອໃຫ້ໄດ້ຮັບປັດໃຈນໍາເຂົ້າກະສິກໍາທີ່ມີລາຄາຖືກ ແລະ ດີກວ່າ
- ຈັດກອງປະຊຸມປະຈໍາອາທິດລະຫວ່າງສະມາຊິກຂອງກຸ່ມຊາວກະສິກອນເພື່ອປຶກສາຫາລືກ່ຽວກັບສິ່ງທ້າທາຍ ແລະ ຊອກຫາວິທີແກ້ໄຂຮ່ວມກັນ
- ສ້າງຜະລິດຕະພັນເຄື່ອງປ່າຂອງດົງໃຫມ່.
- ສະມາຊິກຂອງກຸ່ມຊາວກະສິກອນລົງຢ້ຽມຢາມພາກສະໜາມຢ່າງເປັນປົກກະຕິ ເພື່ອເບິ່ງຄວາມຄືບໜ້າຂອງຊາວກະສິກອນແຕ່ລະຄົນ



**ພວກເຮົາເຮັດວຽກຢູ່ຄຽງຂ້າງຄົນທຸກຍາກ ແລະ ຮ່ວມແຮງຮ່ວມໃຈນຳເຂົາເຈົ້າ ເມື່ອປະຊາຊົນຖືເອົາຕົນເອງເປັນຈຸດໃຈກາງໃນການພັດທະນາທີ່ມີການຈັດຕັ້ງເປັນໝູ່ຄະນະ ກໍສາມາດເຮັດໃຫ້ມີການປ່ຽນແປງທີ່ຍືນຍົງໄດ້**

**ເລື່ອງສັ້ນຂອງທ່ານ ກິດຕາ (ນາຍບ້ານ ບ້ານ ຊອກທາງ, 2024–ປະຈຸບັນ)**

*“ຂ້ອຍໄດ້ຮຽນຮູ້ການປູກຜັກ ແລະ ລ້ຽງສັດ. ຂ້ອຍໄດ້ຮັບແນວພັນ ແລະ ສັດລ້ຽງ, ເຊິ່ງຊ່ວຍປັບປຸງໂພຊະນາການ ແລະ ລາຍໄດ້ຂອງຄອບຄົວຂ້ອຍຜ່ານການຂາຍ.*

*ກ່ອນການເລີ່ມຕົ້ນໂຄງການສະໂມສອນຊາວກະສິກອນ, ລາຍໄດ້ຂອງຄອບຄົວຂ້ອຍເກືອບບໍ່ພຽງພໍທີ່ຈະຄອບຄຸມຄວາມຕ້ອງການພື້ນຖານປະຈຳວັນຂອງພວກເຮົາ, ເຮັດໃຫ້ພວກເຮົາບໍ່ມີໂອກາດທີ່ຈະອອມເງິນເພື່ອອະນາຄົດຂອງລູກຫຼານຂອງພວກເຮົາ.*

*ການນຳສະເໜີໂຄງການສະໂມສອນຊາວກະສິກອນໃນປີ 2024 ໄດ້ໝາຍເຖິງຈຸດປ່ຽນສຳລັບຊຸມຊົນຂອງພວກເຮົາ. ໂຄງການດັ່ງກ່າວໄດ້ໃຫ້ການຝຶກອົບຮົມທີ່ສຳຄັນຄຽງຄູ່ກັບວັດສະດຸກະສິກຳ, ເພື່ອຫຼາກຫຼາຍການຜະລິດຂອງພວກເຮົາ. ໂດຍການເຊື່ອມໂຍງການລ້ຽງເຫັດ, ການລ້ຽງປາ, ການລ້ຽງສັດປີກ, ແລະ ການເຮັດສວນຜັກ, ພວກເຮົາສາມາດຫັນປ່ຽນການປະຕິບັດການດຳລົງຊີວິດຂອງພວກເຮົາໃຫ້ກາຍເປັນແຫຼ່ງລາຍຮັບທີ່ຍືນຍົງ.*

*ໂດຍສະເພາະ, ຄອບຄົວຂອງຂ້ອຍໄດ້ຮັບໄກ່ຫ້າໂຕ ແລະ ປາ 2,000 ໂຕສຳລັບຟາມບ້ານຂອງພວກເຮົາ. ຜ່ານທັກສະທີ່ຂ້ອຍໄດ້ຮັບ, ຂ້ອຍໄດ້ຮັກສາ ແລະ ຂະຫຍາຍການຜະລິດນີ້ນອກເໜືອຈາກການສະໜັບສະໜູນໂຄງການໃນເບື້ອງຕົ້ນ. ໃນມື້ນີ້, ຜົນໄດ້ຮັບແມ່ນຈະແຈ້ງ: ພວກເຮົາພຽງພໍດ້ວຍຕົນເອງແລ້ວ, ຄອບຄຸມຄ່າໃຊ້ຈ່າຍປະຈຳວັນຂອງພວກເຮົາ ໃນຂະນະທີ່ປະສົບຜົນສຳເລັດໃນການລົງທຶນໃນການສຶກສາຂອງລູກຫຼານຂອງພວກເຮົາ ແລະ ສ້າງເງິນຝາກປະຢັດສຳລັບອະນາຄົດຂອງເຂົາເຈົ້າ.*

*ແມ່ນແຕ່ ຫຼັງຈາກໂຄງການສິ້ນສຸດລົງ, ຊາວບ້ານຍັງສືບຕໍ່ນຳໃຊ້ການຝຶກອົບຮົມ, ເຊັ່ນ: ການໃຫ້ອາຫານໄກ່ດ້ວຍເສດຜັກເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍ. ໂຄງການດັ່ງກ່າວໄດ້ນຳມາເຊິ່ງຄວາມສາມັກຄີ, ຄວາມຮູ້, ແລະ ການປ່ຽນແປງທີ່ຍືນຍົງ”.*





# ການປົກປັກຮັກສາຊີວະນາໆພັນ ແລະ ປ່າໄມ້.

**ພວກເຮົາເຮັດວຽກຮ່ວມກັບຊຸມຊົນເພື່ອປົກປ້ອງຄວາມຫຼາກຫຼາຍທາງຊີວະນາໆພັນ ແລະ ປ່າໄມ້ສຳລັບຄົນລຸ້ນຫຼັງ. ເປົ້າໝາຍຂອງພວກເຮົາແມ່ນເພື່ອຮັບປະກັນວ່າຄວາມຮັ່ງມີທາງທຳມະຊາດໃນປະຈຸບັນຈະກາຍເປັນມໍລະດົກຂອງຂອງອານາຄົດ.**



ປ່າໄມ້ທີ່ອຸດົມສົມບູນແມ່ນມີຄວາມສຳຄັນຕໍ່ແຫຼ່ງນ້ຳ ແລະ ຄຸນນະ ພາບນ້ຳ ລວມທັງສັດນ້ຳ, ສະບຽງອາຫານ ແລະ ທີ່ຢູ່ອາໄສຂອງສັດ ປ່າ, ການຮັກສາດິນ ແລະ ການປ້ອງກັນການເຊາະເຈື່ອນ, ການຫຼຸດ ຜ່ອນໄພນ້ຳຖ້ວມ ແລະ ການດູດຊຶມເອົານ້ຳລົງດິນກ່ອນທີ່ຈະໄຫຼລົງສູ່ແມ່ນ້ຳຕ່າງໆ.

ໂດຍການຮ່ວມມືກັບ**ມູນນິທິສັດປ່າໂລກ (WWF)** ແລະ **ສະຫະພັນສາກົນເພື່ອການອະນຸລັກທຳມະຊາດ (IUCN),** ພວກເຮົາໄດ້ຈັດຕັ້ງປະຕິບັດສອງໂຄງການປູກຕົ້ນໄມ້ຢູ່ເມືອງຄູນຄຳ, ແຂວງຄຳມ່ວນໃນປີ 2022-2023.

ໂຄງການໄດ້ລະດົມ ແລະ ຈັດຕັ້ງຊາວກະສິກອນທ້ອງຖິ່ນປະກອບສ່ວນເຂົ້າໃນການປົກປັກຮັກສາປ່າປ້ອງກັນພູໄຊ ແລະ ຮັບປະກັນການຟື້ນຟູປ່າ ຊຸດ ໂຊມຕາມພື້ນທີ່ທີ່ມີສັດປ່າອາໃສຢູ່, ການປົກປັກຮັກສາດິນ, ການປ້ອງກັນການເຊາະເຈື່ອນ, ການບັນເທົາໄພນ້ຳຖ້ວມ ແລະ ການດູດຊຶມເອົານ້ຳລົງດິນກ່ອນທີ່ຈະໄຫຼສູ່ແມ່ນ້ຳຕ່າງໆ.

ໂຄງການດັ່ງກ່າວໄດ້ຈັດຕັ້ງປະຊາຊົນຈຳນວນ 160 ຄອບຄົວເພື່ອປູກປ່າ ແລະ ດູແລຮັກສາເບ້ຍໄມ້ 50.000 ເບ້ຍໃນສວນກ້າເບ້ຍ, ເພື່ອນຳເອົາໄປປູກໃນເຂດປ່າຊຸມຊົນ ແລະ ດູແລຮັກສາຕົ້ນໄມ້ນ້ອຍຈົນກ່ວາມັນຈະໃຫຍ່ສົມບູນ.

ສ່ວນໜຶ່ງຂອງເບ້ຍໄມ້ແມ່ນຊະນິດພັນໄມ້ເນື້ອແຂງໃນທ້ອງຖິ່ນ ຊຶ່ງໃນທີ່ສຸດກໍຈະເລີນເຕີບເປັນຕົ້ນໄມ້ໃຫຍ່ ແລະ ສ້າງລະບົບນິເວດໃຫ້ກັບຄືນສູ່ສະພາບເດີມ ແລະ ປັບປຸງເປັນທີ່ຢູ່ອາໄສຂອງສັດປ່າ.

ເບ້ຍໄມ້ອີກສ່ວນໜຶ່ງແມ່ນຫວາຍທີ່ສະໜອງເປັນຜະລິດຕະພັນເຄື່ອງປ່າຂອງດົງເຊັ່ນ: ໜໍ່ຫວາຍທີ່ນິຍົມນຳມາໃຊ້ເປັນສ່ວນປະກອບອາຫານພື້ນບ້ານຂອງລາວ ແລະ ລຳຕົ້ນຂອງມັນສາມາດນຳມາເຮັດເຄື່ອງຫັດຖະກຳ ແລະ ເຄື່ອງເຟີນີເຈີຕ່າງໆ.

ຫຼາຍໆຄອບຄົວໃນເຂດຊົນນະບົດໄດ້ຮັບຜົນກະທົບທາງລົບຈາກການສູນເສຍພື້ນທີ່ປົກຫຸ້ມຂອງປ່າໄມ້ທີ່ພາໃຫ້ເກີດໄພນ້ຳຖ້ວມ ແລະ ດິນເຈື່ອນເພີ່ມຂຶ້ນໃນລະດູຝົນ. ສະພາບການດັ່ງ ກ່າວໄດ້ສ້າງຄວາມເສຍຫາຍຕໍ່ການຜະລິດ ແລະ ການດຳລົງຊີວິດ.

ເພາະສະນັ້ນ, ອົງການ HPP ຈຶ່ງຖືເອົາວຽກງານປູກຕົ້ນໄມ້ເປັນອົງປະກອບໜຶ່ງທີ່ສຳຄັນຢູ່ໃນທຸກໂຄງການສົ່ງເສີມກຸ່ມຊາວກະສິກອນທັງໝົດ.



ໃນປີ 2024, ພວກເຮົາໄດ້ເຊັນສັນຍາ 3 ປີກັບ**ກອງທຶນພິທັກສິ່ງແວດລ້ອມ ແລະ ຊີວະນາໆພັນ** (Darwin Initiative, UK-Aid) ເພື່ອຂະຫຍາຍກິດຈະກຳຂອງໂຄງການ ແລະ ລວມເອົາ **600** ຄອບຄົວໃນອີກ **12** ບ້ານ, ປູກປ່າທ້ອງຖິ່ນທີ່ຊຸດໂຊມຄືນໃໝ່, ປູກຜັກ ແລະ ຜະລິດຕະພັນປ່າໄມ້ທີ່ບໍ່ແມ່ນໄມ້ຫຼາກຫຼາຍຊະນິດ ແລະ ຕະຫຼາດພືດເພື່ອສົ່ງເສີມຊີວິດການເປັນຢູ່, ພ້ອມທັງຊ່ວຍລັດຖະບານໃນການບັງຄັບໃຊ້ລະບຽບການເພື່ອຢຸດການຄ້າຂາຍສັດປ່າທີ່ຜິດກົດໝາຍ ແລະ ການຕັດໄມ້ທຳລາຍປ່າ.

ຊື່ຂອງໂຄງການແມ່ນ "ຊຸມຊົນລາວແກ້ໄຂບັນຫາຄວາມທຸກຍາກ ແລະ ການສູນເສຍຄວາມຫຼາກຫຼາຍທາງຊີວະພາບ ເພື່ອການພັດທະນາແບບຍືນຍົງ".

ຜົນໄດ້ຮັບບາງຢ່າງຈາກການປະຕິບັດໂຄງການໄດ້1ປີ:

- ຊາວບ້ານ **1,314** ຄົນໄດ້ປູກຕົ້ນໄມ້ແຂງ **200,238** ຕົ້ນໃນທົ່ວເນື້ອທີ່ປ່າສະຫງວນ **145** ເຮັກຕາ
- ສະໂມສອນຊາວກະສິກອນ **12** ແຫ່ງໄດ້ປູກສວນສາທິດ **12** ແຫ່ງສຳລັບການປູກຜັກຫຼາກຫຼາຍຊະນິດລວມທັງພືດສະໝຸນໄພ
- ເຮືອນຮົ່ມ **60** ຫຼັງໄດ້ຖືກສ້າງຂຶ້ນເພື່ອໃຫ້ສາມາດປູກໄດ້ໃນລະດູຝົນໃດ້
- ຊາວກະສິກອນ **600** ຄົນໄດ້ຮັບການຝຶກອົບຮົມກ່ຽວກັບການລ້ຽງສັດ, ສຸຂະພາບສັດ ແລະ ການໃຊ້ວັກຊີນ, ໃນຂະນະທີ່ກອງທຶນໝູນວຽນສັດລ້ຽງໄດ້ຖືກນຳສະເໜີ.





ຊາວກະສິກອນເປັນກຸນແຈ ອັນສຳຄັນ – ແນວທາງການ ປະຕິບັດທີ່ຍືນຍົງສາມາດຢຸດ ຕິການຕັດໄມ້ທຳລາຍປ່າໄດ້.

ດ້ວຍການຊ່ວຍເຫຼືອ, ການ ຝຶກອົບ ຮົມ, ການສະໜອງ ທຶນ ແລະ ນະໂຍ ບາຍທີ່ ຖືກຕ້ອງ, ຊາວກະສິກອນສາ ມາດເພີ່ມປະສິດທິພາບໃນ ການຜະລິດໃຫ້ສູງຂຶ້ນໄດ້ ໂດຍບໍ່ຈຳເປັນຕ້ອງບຸກລຸກ ປ່າໄມ້ເພື່ອເຮັດການຜະ ລິດ, ທັງເປັນການປ້ອງກັນທຳມະ ຊາດ ແລະ ອານາຄົນຂອງ ເຂົາເຈົ້າ.



ພວກເຮົາຝຶກອົບຮົມໃຫ້ຄວາມຮູ້ ແລະ ຈັດຕັ້ງກຸ່ມຊາວກະສິກອນ ເພື່ອປົກປັກຮັກສາທີ່ດິນ, ປ່າໄມ້ ແລະ ແມ່ນ້ຳ, ນຳໃຊ້ນ້ຳບາດານ ຢ່າງມີປະສິດທິຜົນ, ນຳໃຊ້ທີ່ດິນ ເພື່ອປູກຝັງ ແລະ ລ້ຽງສັດ, ປັບ ໃຊ້ແນວທາງການຜະລິດກະສິກຳແບບຟື້ນຟູ ແລະ ເຮັດວຽກ ໃຫ້ກົມກືນກັບທຳມະຊາດ ແລະ ບໍ່ທຳລາຍມັນ.



# ການປຸງແຕ່ງອາຫານທີ່ສະອາດ ແລະ ສິ່ງແວດລ້ອມ

ຄອບຄົວສ່ວນໃຫຍ່ຢູ່ເຂດຊົນນະບົດຂອງລາວປຸງແຕ່ງອາຫານຢູ່ໃນເຮືອນຄົວທີ່ຕິດກັບເຮືອນ.
ເຂົາເຈົ້າດັງເຕົາໄຟດ້ວຍໄມ້ທີ່ນໍາມາຈາກປ່າໄມ້ ຫຼື ຖ່ານທີ່ຜະລິດຢູ່ໃນທ້ອງຖິ່ນ.
ວິທີດັ່ງກ່າວນີ້ມີຄວາມສ່ຽງຕໍ່ສຸຂະພາບຢ່າງຫຼວງຫຼາຍ, ໂດຍສະເພາະຕໍ່ແມ່ຍິງ ແລະ ເດັກນ້ອຍທີ່ໂດຍປົກກະຕິຈະຢູ່ໃນເຮືອນຄົວເປັນເວລາຫຼາຍຊົ່ວໂມງໃນທຸກໆມື້.
ນອກຈາກນັ້ນ, ການຕັດໄມ້ເພື່ອເຮັດຟືນ, ການຜະລິດ ແລະ ນໍາໃຊ້ຖ່ານເພື່ອເປັນເຊື້ອເພີງຍັງສົ່ງຜົນກະທົບຕໍ່ສິ່ງແວດລ້ອມຢ່າງຫຼວງຫຼາຍ.
ນັບແຕ່ປີ 2018 ເປັນຕົ້ນມາ, ອົງການ HPP ໄດ້ຈັດຕັ້ງໂຄງ ການເຕົາປະຢັດຊີວະມວນຢູ່ແຂວງບໍລິຄໍາໄຊ ແລະ ແຂວງຄໍາມ່ວນໃຫ້ກັບ760 ຄອບຄົວ ແລະ ຝຶກອົບຮົມໃຫ້ເຂົາເຈົ້າຮູ້ກ່ຽວການນໍາໃຊ້.
ເຕົາປະຢັດຊີວະມວນແມ່ນເຕີມເຊື້ອເພີງດ້ວຍຂີ້ແກບ ແລະ ສິ່ງເສດເຫຼືອຈາກການເກັບກ່ຽວຜົນຜະລິດກະສິກໍາ ທີ່ຊາວກະສິ ກອນທຸກຄົນສາມາດເກັບຮັກສາໄວ້ຫຼັງຈາກການເກັບກ່ຽວ. ຂີ້ແກບຈະບໍ່ເຜົາໄຫມ້ເປັນຂີ້ເຖົ່າ ແຕ່ຈະຄົງຕົວເປັນຖ່ານຢູ່ໃນເຕົາ ແລະ ບໍ່ປ່ອຍຄວັນອອກມາ.

ຜົນຈາກການເຜົາໃໝ້ຂີ້ແກບໄດ້ກ່າຍເປັນຖ່ານຊີວະພາບ ເຊິ່ງທູກຄອບຄົວໄດ້ຮັບການຝຶກອົບຮົມໃຫ້ນໍາໃຊ້ຖ່ານຂີ້ແກບເຜົາເພື່ອເຮັດຝຸ່ນບົ່ມ ແລະ ປຸຍຊີວະພາບຢູ່ສວນຂອງຄົວເຂົາເຈົ້າ.
ໄດ້ຮັບທຶນຊ່ວຍເຫຼືອລ້າຈາກ ກອງທຶນສິ່ງແວດລ້ອມໂລກ, ອົງ ການ ອີຢູ, ກອງທຶນຂອງປະເທດການາດາເພື່ອການລິເລີ່ມການພັດທະນາໃນທ້ອງຖິ່ນ ແລະ ສະຖານທູດອິດສະຕາລີ.
ອີກສ່ວນໜຶ່ງທີ່ສໍາຄັນຂອງໂຄງການແມ່ນເພື່ອສ້າງຈິດສໍານຶກໃນຊຸມຊົນກ່ຽວກັບການປ່ຽນແປງຂອງດິນຟ້າອາກາດ ແລະ ການນໍາໃຊ້ເຕົາປະຢັດຊີວະມວນໃນຄົວເຮືອນຍັງສາມາດປະກອບ ສ່ວນເຂົ້າໃນການຫຼູດຜ່ອນ ແລະ ການປັບຕົວຂອງດິນຟ້າອາ ກາດອີກດ້ວຍ.








# ສຸຂະພາບ ແລະ ການປ້ອງກັນພະຍາດ

**ໂຄງການສຸຂະພາບຂອງພວກເຮົາ,ພວກເຮົາຕອບສະໜອງຕໍ່ວິທີການດຳລົງຊີວິດຂອງປະຊາຊົນ; ພວກເຮົາເຮັດວຽກຮ່ວມກັບເຂົາເຈົ້າເພື່ອສ້າງ ແລະ ດູແລຮັກສາສຸຂະພາບທີ່ດີໃນຊຸມຊົນຂອງເຂົາເຈົ້າ ແລະ ຍົກລະດັບຄວາມເປັນຢູ່ທີ່ດີໃຫ້ສູງຂຶ້ນສຳລັບທຸກຄົນ.**




ພວກເຮົາປູກຈິດສໍານຶກໃຫ້ຄວາມຮູ້ກ່ຽວກັບພະຍາດວັນນະໂລກແກ່ຊຸມຊົນຈໍານວນຫຼາຍຮ້ອຍຄົນໃນເຂດຊົນນະບົດ. ພະນັກງານພາກສະຫນາມ ແລະ ອສບ ໄດ້ກໍານົດກໍລະນີຜູ່ສົງໃສເປັນວັນນະໂລກໂດຍການກັ່ນຕອງຈາກການສໍາພາດ ແລະ ການຕິດຕາມເສັ້ນທາງການຕິດຕໍ່ພົວພັນ ແລະ ນໍາສົ່ງພວກເຂົາໄປກວດຫາເຊື້ອຢູ່ໂຮງໝໍ ແລະ ຄລີນິກທີ່ມີເຄື່ອງມືທັນສະໃໝ.

# ພະຍາດວັນນະໂລກ - ໂຄງການຊອກຫາກໍລະນີທີ່ເປັນວັນນະໂລກ ວິທີການທີ່ຖືເອົາຄົນເປັນສູນກາງໃນການຄວບຄຸມ ແລະ ປ້ອງກັນພະຍາດ

ໂຄງການຊອກຫາກໍລະນີເປັນວັນນະໂລກແມ່ນອີງໃສ່ແນວຄວາມຄິດການຄວບຄູມພະຍາດວັນນະໂລກຮອບດ້ານຂອງອົງການມະນຸດສະທໍາເພື່ອຄົນສູ່ຄົນ ຊຶ່ງໄດ້ຖືກພັດທະນາ ແລະ ທົດສອບໃນບັນດາປະເທດທີ່ອົງການ **HPP** ດໍາເນີນງານຢູ່ໃນທົ່ວໂລກ. **TC TB** ແມ່ນອີງໃສ່ການລະດົມຊຸມຊົນຢ່າງໃກ້ຊິດໃນຂັ້ນພື້ນຖານ ແລະ ເປັນໃຈກາງຂອງແນວຄວາມຄິດທີ່ຫື່ວ່າ ມີພຽງແຕ່ຄົນເທົ່ານັ້ນທີ່ຈະສາມາດປົດປ່ອຍຕົນເອງໃຫ້ຫຼູດພົ້ນອອກຈາກພະຍາດຕ່າງໆໄດ້. ອົງການມະນຸດສະທໍາເພື່ອຄົນສູ່ຄົນ ຈ້າງພະນັກງານພາກສະໜາມທີ່ດໍາລົງຊີວິດ ແລະ ເຮັດວຽກປະຈໍາຢູ່ບ້ານເປົ້າໝາຍ. ພວກເຂົາເຈົ້າຈັດກອງປະຊຸມກັບບ້ານເປົ້າໝາຍ ແລະ ເມື່ອໃດທີ່ເຫັນວ່າເປັນໄປໄດ້ ພະນັກ ງານພາກສະໜາມຈະລົງໄປຫາແຕ່ລະຄົວເຮືອນ ເພື່ອຊອກຫາຄົນເຈັບ ເປັນພະຍາດວັນນະໂລກ ແລະ ນໍາສົ່ງເຂົາເຂົ້າໄປກວດຫາເຊື້ອຢູ່ຄລີນິກທ້ອງຖິ່ນ. ທີມງານໂຄງການເຮັດວຽກຮ່ວມກັບພະນັກງານ ອສບ ບ້ານໃນທຸກກິດຈະກໍາ ແລະ ລະດົມເອົາຊຸມຊົນໃຫ້ຊ່ວຍເຫຼືອເພື່ອນບ້ານທີ່ໄດ້ຮັບຜົນກະທົບຈາກພະຍາດວັນນະໂລກ ໂດຍຜ່ານການສ້າງຕັ້ງກຸ່ມ ຕິດຕາມ ແລະ ຊ່ວຍເຫຼືອຄົນເຈັບ **(TRIOs)**. ກຸ່ມ **TRIOs** ນີ້ຈະ ປະກອບດ້ວຍຄົນເຈັບທີ່ເປັນວັນນະໂລກ ແລະ ສະມາຊິກໃນຄອບຄົວ ຫຼື ໝູ່ເພື່ອນ 2 ຄົນທີ່ໄດ້ຮັບການຝຶກອົບຮົມໃຫ້ຄວາມຮັບຮູ້ກ່ຽວກັບພະຍາດວັນນະໂລກ ແລະ ເລື່ອງໂພຊະນາການ. ການ. ການສ້າງຕັ້ງກູມ TRIOs ແມ່ນເພື່ອຮັບປະກັນໃຫ້ຄົນເຈັບໄດ້ກິນຢາໃນແຕ່ລະວັນ. ອົງ ການ HPP ໃຫ້ຄວາມຮູ້ ແລະ ວັດສະດຸອຸປະກອນທີ່ຈໍາເປັນສໍາລັບການປູກພືດຜັກ, ການລ້ຽງສັດ ແລະ ປັບປຸງໂພຊະນາການໃຫ້ແກ່ກຸ່ມ ຕິດຕາມ ແລະ ຊ່ວຍເຫຼືອຄົນເຈັບ **(TRIOs).**

ສົ່ງເສີມໂພສະນາການໃຫ້ຄົນເຈັບສາມາດຫາຍຂາດຈາກພະຍາດວັນນະໂລກ ແລະ ປັບປຸງສຸຂະພາບຂອງເຂົາເຈົ້າໂດຍລວມ ເພື່ອຫຼູດຜ່ອນຄວາມສ່ຽງຕໍ່ການກັບມາເປັນພະຍາດອີກເທື່ອໜຶ່ງ. ທຶນທີ່ໄດ້ຮັບຈາກກອງທຶນໂລກ, ອົງການ **HPP** ໄດ້ຈັດຕັ້ງໂຄງການ 3 ປີສໍາເລັດໃນເດືອນທັນວາ **2020**, ຕາມດ້ວຍໂຄງການ **3** ປີໃຫມ່ (ລວມທັງກອງທຶນໂລກ) ເຊິ່ງເລີ່ມໃນປີ **2021.**

ອີງໃສ່ວິທີການທີ່ປະສົບຜົນສໍາເລັດຂອງ **HPP** ແລະ ການຮ່ວມມືອັນແຂງແກ່ນກັບກະຊວງສາທາລະນະສຸກໃນ ສປປ ລາວ ພວກເຮົາໄດ້ເຊັນສັນຍາອີກ **3** ປີກັບ**ກອງທຶນຊ່ຽວຊານຝລັ່ງ (Expertise France L'Initiative)** ໃນປີ **2020.** ສັນຍາດັ່ງກ່າວໄດ້ຂະຫຍາຍອອກໄປອີກໄລຍະທີ **2** ແຕ່ປີ **2024 – 2027** ຢູ່ແຂວງສະຫວັນນະເຂດ.

ທັງສອງໂຄງການນີ້ ພວກເຮົາໄດ້ຈັດຕັ້ງປະຕິບັດຮ່ວມກັບ **ສະມາຄົມສຸຂະພາບຊຸມຊົນ ແລະ ການມີສ່ວນຮ່ວມ (CHIAs)** ແລະ ກວມເອົາ **22** ເມືອງໃນ **3** ແຂວງແຕ່**ປີ 2021-24.**

ໂຄງການຂອງພວກເຮົາມີບົດບາດທີ່ສໍາຄັນຫຼາຍຍິ່ງຂຶ້ນໃນຄວາມພະຍາຍາມຂອງກະຊວງສາທາລະນະສຸກໃນການລຶບລ້າງພະຍາດວັນນະໂລກໃນກ່ອນປີ **2030.**





**ພວກເຮົາໄປຫາແຕ່ລະຫຼັງຄາເຮືອນ ທີ່ຢູ່ໃນບ້ານຫ່າງໄກສອກ ຫຼີກເພື່ອ ໃຫ້ຄວາມຮູ້ກ່ຽວກັບພະຍາດວັນ ນະ ໂລກ.**

ເປົ້າຫມາຍຂອງພວກເຮົາແມ່ນເພື່ອ
ບັນລຸທັເຫຼົ່າຄົນ
ຜູ້ທີ່ອາດຈະທົນທຸກຈາກພະຍາດ
ໂດຍບໍ່ຮູ້ຕົວ,
ເພື່ອໃຫ້ເຂົາເຈົ້າໄດ້ຮັບການກວດ,
ການປິ່ນປົວ,
ແລະຫາຍດີຂາກພະຍາດ.

ພະນັກງານພາກສະໜາມຂອງ ພວກເຮົາເດີນທາງໄປຫາຊຸມຊົນ ຫ່າງໄກຊອກຫຼີກຫຼາຍຮ້ອຍແຫ່ງ. ເຂົ້າເຖິງຜູ້ທີ່ຕ້ອງການຫຼາຍທີ່ສຸດ. ເຮັດວຽກຢ່າງໃກ້ຊິດກັບເຈົ້າໜ້າທີ່ ພາກສະໜາມ ແລະ ອາສາສະໝັກ ສາທາລະນະສຸກບ້ານ, ພວກເຮົາກໍາ ນົດກໍລະນີ TB ທີ່ເປັນໄປໄດ້ໂດຍ ຜ່ານການກວດສອບການ ເຄື່ອນ ໄຫວ ແລະການຕິດຕາມການຕິດຕໍ່

# ພະຍາດວັນນະໂລກ - ໂຄງການຊອກຫາກໍລະນີທີ່ເປັນວັນນະໂລກ ວິທີການທີ່ຖືເອົາຄົນເປັນສູນກາງໃນການຄວບຄຸມ ແລະ ປ້ອງກັນພະຍາດ




**ຜົນໄດ້ຮັບຂອງໂຄງການຄວບຄຸມພະຍາວັນນະໂລກຮອບດ້ານ (TC TB) 2021-2025**

**ການລະບຸຕົວຄົນເຈັບທີ່ເປັນພະຍາດວັນນະ ໂລກ ແລະ ນຳສົ່ງກວດ:**
ທີມງານໂຄງການຂອງ HPP ໄດ້ປະກອບສ່ວນເຂົ້າໃນການຊອກຫາກໍລະນີເປັນພະຍາດວັນນະໂລກໄດ້ 988 ກໍລະນີ.

**ຄົນທີ່ເຂົ້າເຖິງ:**
ທີມງານໂຄງການໄດ້ເຂົ້າເຖິງຈຳນວນ 200,000 ຄົນ ແລະ ໃຫ້ຄວາມຮູ້ກ່ຽວກັບພະຍາດວັນນະໂລກ

**ພະນັກງານສຸກສາລາ ແລະ ພະນັກງານ ອສບ ບ້ານ ໄດ້ຝຶກອົບຮົມ:**
ອົງການ HPP ໄດ້ຝຶກອົບຮົມໃຫ້ພະນັກງານສຸກສາ ລາ ແລະ ພະນັກງານ ອສບ ບ້ານ ຈຳນວນ 1,312 ຄົນ

**ໂດຍການຮັບຮູ້ຄວາມສຳຄັນຂອງໂພຊະນາການໃນການຟື້ນຕົວ, ໂຄງການໄດ້ສະໜອງໃຫ້ຄົນເຈັບເປັທີ່ນວັນນະໂລກດ້ວຍຊຸດອາຫານທີ່ມີວິຕາມິນແລະທາດໂປຼຕີນທີ່ຈຳເປັນ. ສິ່ງເຫຼົ່ານີ້ແມ່ນຊ່ວຍໃຫ້ພວກເຂົາຟື້ນຟູຄວາມເຂັ້ມແຂງແລະປັບປຸງການຕອບສະໜອງຕໍ່ການປິ່ນປົວ.**



# ກຸ່ມ TRIO – ກຸ່ມຕົວແບບສຳລັບການດູແລການປິ່ນປົວ ແລະ ການຊ່ວຍເຫຼືອ





## ການຊ່ວຍເຫຼືອທີ່ຕໍ່ເນື່ອງໂດຍອີງໃສ່ຄອບຄົວ

ພື້ນຖານທີ່ສຳຄັນໃນໂຄງການສາທາຂອງພວກເຮົາແມ່ນລະບົບທີ່ອີງໃສ່ຄອບຄົວທີ່ເອີ້ນວ່າ TRIO ທີ່ຊ່ວຍເຫຼືອຄົນເປັນວັນນະໂລກ ແລະ HIV/AIDS ໃຫ້ໄດ້ຮັບການປິ່ນປົວ ແລະ ເບິ່ງແຍງພະຍາດຕິດແປດ.

ໃນໂຄງການ TC TB ແລະ HOPE ຂອງອົງການ HPP ພວກເຮົາຊ່ວຍຄົນເຈັບເພື່ອສ້າງເປັນກຸ່ມຊ່ວຍເຫຼືອ ແລະ ຕິດຕາມຄົນເຈັບ (TRIO).

ກຸ່ມ TRIO ປະກອບດ້ວຍຄົນເຈັບ ແລະ ບຸກຄົນໃກ້ສິດໃນຄອບ ຄົວ ຫຼື ໝູ່ເພື່ອນອີກສອງຄົນ. ຫນ້າທີ່ຕົ້ນຕໍຂອງກຸ່ມແມ່ນເພື່ອຮັບ ປະກັນການກິນຢາໃນແຕ່ລະວັນຂອງຄົນເຈັບ ແລະ ການປິ່ນປົວທີ່ຕໍ່ເນື່ອງ. ກຸ່ມ TRIO ໄດ້ຮັບການຝຶກຝົນໃຫ້ຄວາມຮູ້ກ່ຽວກັບໂພຊະນາການ ແລະ ພະຍາດວັນນະໂລກ ຫຼື HIV/AIDS ແລະ ໄດ້ຮັບການຊ່ວຍເຫຼືອເພື່ອປະຕິບັດວຽກງານຂອງຕົນໃນການຮັບໃຊ້ຄົນເຈັບ.

ອົງການ HPP ສ້າງກຸ່ມຕິດຕາມ ແລະ ຊ່ວຍເຫຼືອຄົນເຈັບ (TRIO) ທີ່ມີຄວາມຮູ້ ແລະ ອຸປະກອນໃນການປູກຜັກ, ການລ້ຽງສັດ ແລະ ປັບປຸງໂພຊະນາການ. ການປັບປຸງໂພຊະນາການຈະຊ່ວຍການຟື້ນຕົວຂອງຄົນເຈັບ TB ແລະ HIV, ເສີມສ້າງລະບົບພູມຄຸ້ມກັນຂອງເຂົາເຈົ້າ ແລະ ປັບປຸງສຸຂະພາບໂດຍລວມຂອງເຂົາ ເຈົ້າເພື່ອຫຼຸດຜ່ອນຄວາມສ່ຽງຕໍ່ການກັບຄືນມາເປັນພະຍາດອີກຄັ້ງ.

ກຸ່ມ TRIO ໄດ້ຮັບການສະໜັບສະໜູນຈາກພະນັກງານສາທາລະ ນະສຸກບ້ານທີ່ເປັນພາກສ່ວນໜຶ່ງຂອງໂຄງການ.





*ນາງມຸດ,ຜົວຂອງລາວແລະເອື້ອຍຂອງລາວໄດ້ເຂົ້າມາເປັນສະມາຊິກກຸ່ມ TRIO. ເຂົາເຈົ້າໄດ້ຮັບການຝຶກອົບຮົມໃຫ້ຄວາມຮູ້ກ່ຽວກັບພະຍາດວັນນະໂລກ, ໂພຊະນາການ ແລະ ຄວາມສຳຄັນຂອງການປິ່ນ ປົວຢ່າງຕໍ່ເນື່ອງ. ຫນ້າທີ່ຕົ້ນຕໍຂອງກຸ່ມ TRIO ແມ່ນເພື່ອຮັບປະກັນວ່າ ນາງມຸດ ໄດ້ກິນຢາໃນແຕ່ລະວັນ ແລະ ປະຕິບັດຕາມແຜນ ການປິ່ນປົວຂອງລາວ.*



# ການພັດທະນາຊຸມຊົນ

ອົງການມະນຸດສະທຳເພື່ອຄົນສູ່ຄົນ(HPP) ພວກເຮົາເຊື່ອວ່າທຸກໆຊຸມຊົນມີສັກກະຍະພາບທີ່ຈະຈະເລີນຮຸ່ງເຮືອງ. ພວກເຮົາເຮັດວຽກຮ່ວມກັບຊຸມຊົນທ້ອງຖິ່ນເພື່ອທຳລາຍອຸປະສັກ ແລະ ສ້າງໂອກາດທີ່ຍືນຍົງ, ຮັບປະກັນວ່າ 'ຊີວິດທີ່ດີຂຶ້ນ' ບໍ່ແມ່ນພຽງແຕ່ຄວາມຝັນ, ແຕ່ເປັນຄວາມເປັນຈິງຮ່ວມກັນ.



## ການສ້າງລາຍຮັບໃຫ້ແຮງງານເຄື່ອນຍ້າຍ ແລະ ແມ່ຍິງທີ່ອ່ອນແອ

ໃນລະຫວ່າງ ແລະ ພາຍຫຼັງການແຜ່ລະບາດຂອງພະຍາດໂຄວິດໄດ້ມີແຮງງານເຄື່ອນຍ້າຍຈໍານວນ 300,000 ຄົນຕົກງານຢູ່ປະ ເທດໄທ ແລະ ເດີນທາງກັບຄືນມາລາວ. ພວກເຂົາໄດ້ກັບຄືນມາ ບ້ານເກີດຂອງຕົນ ແລະ ກໍບໍ່ມີວຽກເຮັດງານທໍາ.

ຈາກການໃຫ້ທຶນສ່ວຍເຫຼືອລ້າຈາກທະນາຄານ **ADB**, ອົງການ **HPP** ໄດ້ຈັດຝຶກອົບຮົມ, ບຸກລະດົມ ແລະ ຈັດຕັ້ງແຮງງານເຄື່ອນຍ້າຍຈໍານວນໜຶ່ງຢູ່ໃນ 5 ບ້ານໃນເຂດຊົນນະບົດຂອງແຂວງຄໍາມ່ວນ. ໂຄງການດັ່ງກ່າວມີເປົ້າໝາຍເພື່ອຊ່ວຍໃຫ້ເຂົາເຈົ້າປັບຕົວໃຫ້ເຂົາເຈົ້າກັບບ້ານເກີດຂອງຕົນເອງ.

ໂດຍສະເພາະ ໂຄງການໄດ້ສຸມໃສ່ເພື່ອປັບປຸງຄຸນນະພາບຊີວິດ ແລະ ຄວາມສາມາດໃນການຟື້ນຕົວທາງດ້ານເສດທະກິດຂອງແຮງງານເຄື່ອນຍ້າຍ ຊຶ່ງໄດ້ສ້າງຕັ້ງທຸລະກິດຂະໜາດນ້ອຍ ແລະ ຝຶກອົບຮົມໃຫ້ເຂົາເຈົ້າມີທັກສະຄວາມສາມາດຢ່າງພຽງພໍ ພ້ອມ ທັງໃຫ້ການຊ່ວຍເຫຼືອຄອບຄົວເຂົາເຈົ້າຂະຫຍາຍການປູກພືດຫຼາຍຊະນິດເພື່ອເພີ່ມຜົນຜະລິດ ແລະ ລາຍໄດ້.

ໃນປີ **2023**, ອົງການ **HPP** ໄດ້ນໍາໃຊ້ຮູບແບບກິດຈະກໍາການສ້າງລາຍໄດ້ໃຫ້ແກ່ແມ່ຍິງທີ່ອ່ອນແອ ຈາກການສ້າງຕັ້ງໂຄງການໜຶ່ງທີ່ໄດ້ຮັບທຶນຈາກກອງທຶນ **L'Oreal ເພື່ອແມ່ຍິງ** ຢູ່ໃນ10 ບ້ານເປົ້າໝາຍເພີ່ມອີກ ຊຶ່ງຈະສືບຕໍ່ຮອດທ້າຍປີ 2025.

ໃນປີ 2024, ໂຄງການດັ່ງກ່າວໄດ້ຂະຫຍາຍການຊ່ວຍເຫຼືອແກ່ແມ່ຍິງຈໍານວນ 250 ຄົນຕື່ມອີກຢູ່ໃນ 5 ບ້ານໂດຍໄດ້ຮັບທຶນຊ່ວຍເຫຼືອຈາກ ບໍລິສັດ ເບຍ **Heineken.**



**ເລື່ອງລາວຂອງທ່ານ ນາງ ດວງຕາ ພະຈະເລີນ (ບ້ານໂພນຍານ້ອຍ, 2024–ປະຈຸບັນ)**

*"ຂ້ອຍອາໄສຢູ່ບ້ານໂພນຍານ້ອຍກັບຄອບຄົວຂອງຂ້ອຍທີ່ມີສະມາຊິກສີ່ຄົນ. ກ່ອນປີ 2024, ລາຍໄດ້ຂອງພວກເຮົາແມ່ນອາໄສຮ້ານຄ້າຂະໜາດນ້ອຍເທົ່ານັ້ນ. ຜ່ານໂຄງການຫຼຸດຜ່ອນ COVID-19 ຂອງ HPP Laos, ຂ້ອຍໄດ້ຮັບການຝຶກອົບຮົມ ແລະ ວັດສະດຸສໍາລັບສັດປີກ, ປາດຸກ ແລະ ການຜະລິດເຮືອນແກ້ວ.*

*ໂດຍການນໍາໃຊ້ເຕັກນິກການກະສິກໍາແບບຍືນຍົງເຫຼົ່ານີ້, ພວກເຮົາໄດ້ປັບປຸງໂພຊະນາການຂອງພວກເຮົາຢ່າງຫຼວງຫຼາຍ ແລະ ກະຈາຍລາຍໄດ້ຂອງພວກເຮົາ. ປະຈຸບັນພວກເຮົາມີລາຍໄດ້ປະມານ 2,700,000 ກີບຕໍ່ເດືອນ (122 ໂດລາສະຫະລັດ) ຈາກກິດຈະກໍາເຫຼົ່ານີ້ ແລະ ສືບຕໍ່ນໍາໃຊ້ວິທີການຂອງໂຄງການເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນຂອງຄອບຄົວຂອງພວກເຮົາ."*



# ກຸ່ມເງິນຝາກປະຢັດຂັ້ນຊຸມຊົນ

## HPP Laos ຮ່ວມກັບສະຫະພັນແມ່ຍິງສ້າງຕັ້ງກຸ່ມເງິນຝາກປະຢັດຂັ້ນຊຸມຊົນ 122 ກຸ່ມໃນແຂວງຄໍາມ່ວນ

ກຸ່ມເງິນຝາກປະຢັດຂັ້ນຊຸມຊົນ (CSG) ເປັນເສົາຄ້ຳສຳຄັນສຳລັບຄວາມຢືດຢຸ່ນທາງດ້ານການເງິນຂອງທ້ອງຖິ່ນ. ໂດຍການຝາກເງິນປະຈຳເດືອນຈາກສະມາຊິກເຂົ້າໃນກອງທຶນລວມໝູ່, ສະມາຊິກສາມາດເຂົ້າເຖິງສິນເຊື່ອ, ການປະກັນໄພສຸກເສີນ, ເປັນເຄື່ອງຈັກທີ່ສຳຄັນສຳລັບການເປັນຜູ້ປະກອບການຂະໜາດນ້ອຍ ແລະ ຄວາມໝັ້ນຄົງຂອງຄົວເຮືອນ, ແລະ ສະພາບແວດລ້ອມທີ່ມີໂຄງສ້າງສຳລັບການເຕີບໂຕຂອງທຶນ.

**ວິທີການດຳເນີນງານຂອງພວກເຮົາ**

ຫົວໃຈສຳຄັນຂອງກຸ່ມດັ່ງກ່າວຄືດຳເນີນງານບົນພື້ນຖານຂອງຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນແລະກັນ ແລະ ການຝາກເງິນທີ່ມີວິໄນ.

**ການປະກອບສ່ວນເປັນປະຈຳ:** ສະມາຊິກປະກອບສ່ວນ "ສ່ວນແບ່ງ" ທີ່ຄົງທີ່ໃນລະຫວ່າງກອງປະຊຸມປະຈຳອາທິດ ຫຼື ປະຈຳເດືອນ.

**ກອງທຶນກູ້ຢືມ:** ທຶນທີ່ສະສົມໄວ້ນີ້ຈະຖືກນຳໄປໃຊ້ເປັນເງິນກູ້ດອກເບ້ຍຕ່ຳໃຫ້ແກ່ສະມາຊິກ ເພື່ອນຳໃຊ້ເປັນຄ່າຮຽນ, ຄ່າໃຊ້ຈ່າຍທາງການແພດ, ຫຼື ການລົງທຶນທາງທຸລະກິດ.

**ກອງທຶນສັງຄົມ:** ສ່ວນໜຶ່ງຂອງການປະກອບສ່ວນທີ່ແຍກຕ່າງຫາກ ແລະ ໜ້ອຍກວ່າມັກຈະຖືກຈັດສັນໄວ້ເປັນຕາໜ່າງຄວາມປອດໄພເພື່ອໃຫ້ເງິນຊ່ວຍເຫຼືອ ຫຼື ການຊ່ວຍເຫຼືອທີ່ບໍ່ມີດອກເບ້ຍໃນຊ່ວງເວລາທີ່ໂສກເສົ້າ ຫຼື ໄພພິບັດທາງທຳມະຊາດ.

**ຜົນກະທົບ ແລະ ຜົນສຳເລັດທີ່ສຳຄັນ**

ຄວາມສຳເລັດຂອງ CSG ບໍ່ພຽງແຕ່ວັດແທກໃນຍອດເງິນທັງໝົດຂອງບັນຊີທະນາຄານເທົ່ານັ້ນ, ແຕ່ຍັງວັດແທກໃນການປ່ຽນແປງທີ່ຈັບຕ້ອງໄດ້ໃນຊຸມຊົນ:

1. **ຄວາມຮູ້ດ້ານການເງິນ**: ສະມາຊິກໄດ້ພັດທະນາທັກສະຂັ້ນສູງໃນການວາງງົບປະມານ, ການເກັບຮັກສາ-ການບັນທຶກ ແລະ ການວາງແຜນການເງິນໄລຍະຍາວ.
2. **ຄວາມເປັນອິດສະຫຼະທາງເສດຖະກິດ:** ການເຂົ້າເຖິງສິນເຊື່ອພາຍໃນຊູມຂົນໄດ້ຊ່ວຍໃຫ້ສະມາຊິກສາມາດຫຼີກລ່ຽງຜູ້ໃຫ້ກູ້ຢືມທີ່ເອົາປຽບໄດ້ ແລະ ຊ່ວຍຮັກສາຄວາມຮັ່ງມີພາຍໃນຊຸມຊົນ.
3. **ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ:** ໂດຍການສະໜອງເວທີສຳລັບການຄຸ້ມຄອງທາງດ້ານການເງິນ, ກຸ່ມດັ່ງກ່າວໄດ້ຍົກລະດັບອຳນາດການຕັດສິນໃຈຂອງແມ່ຍິງພາຍໃນຄົວເຮືອນຂອງເຂົາເຈົ້າຢ່າງຫຼວງຫຼາຍ.

ກຸ່ມເງິນຝາກປະຢັດເປັນຫຼາຍກວ່າທະນາຄານ; ມັນເປັນຫ້ອງຮຽນ ແລະ ເຄືອຂ່າຍສະໜັບສະໜູນທີ່ຄວາມກ້າວໜ້າຂອງໜຶ່ງຄົນແມ່ນຄວາມກ້າວໜ້າຂອງທຸກຄົນ.





## ສຸຂະພາບແມ່ ແລະ ເດັກ ແລະ ໂພຊະນາການ

ໃນຕອນທຳອິດ, ອົງການ HPP ໄດ້ເລີ່ມຕົ້ນພາລະກິດປັບປຸງຊີວິດຂອງເດັກ ນ້ອຍອາຍຸຕ່ຳກວ່າ 5 ປີ ລົງມາ.

ໃນໄລຍະຕໍ່ມາ, ປະຊາຊົນຈຳນວນ 28,000 ຄົນໃນ 19 ບ້ານໄດ້ຮັບການປຸກ ລະດົມ ແລະ ຝຶກອົບຮົມໃນໂຄງການພັດທະນາຊຸມຊົນທີ່ເອີ້ນວ່າ ໂຄງການຊ່ວຍ ເຫຼືອເດັກ.

ໂຄງການດັ່ງກ່າວສຸມໃສ່ວຽກງານສຸຂະພາບ, ໂພຊະນາການ, ສຸຂະອະນາໄມ ແລະ ການສ້າງລາຍຮັບ.

ຈາກການຊ່ວຍເຫຼືອຂອງໂຄງການ, ປະຊາຊົນໄດ້ສ້າງກຸ່ມດຳເນີນງານຂອງບ້ານທີ່ໄດ້ຮັບການຊຸກຍູ້, ສະໜັບສະໜູນ ແລະ ຈັດຕັ້ງໃຫ້ມີຄວາມກ້າວໜ້າສຳລັບສະ ມາຊິກຄົວເຮືອນຢູ່ໃນບ້ານ.

ໂຄງການຊ່ວຍເຫຼືອເດັກສຸມໃສ່ໂດຍສະເພາະແມ່ນການສ້າງຄວາມເຂັ້ມແຂງໃຫ້ຄອບຄົວເພື່ອຫຼຸດຜ່ອນພາວະການຂາດສານອາຫານໃນບັນດາແມ່ຍິງຖືພາ ແລະເດັກນ້ອຍອາຍຸຕ່ຳກວ່າ 5 ປີ.

ກຸ່ມປະຕິບັດງານຂອງບ້ານເຮັດວຽກຮ່ວມກັນເພື່ອຮັກສາບ້ານໃຫ້ສະອາດ ແລະ ກໍ່ສ້າງພື້ນຖານໂຄງລ່າງສຳລັບນ້ຳໃຊ້, ສຸຂະອະນາໄມ ແລະ ສຸຂະພິບານໂດຍມີເປົ້າໝາຍເພື່ອປັບປຸງສຸຂະພາບ ແລະ ຄວາມຢູ່ດີກິນດີຂອງແຕ່ລະຄອບຄົວ.
ຢູ່ໃນໂຄງການຂອງພວກເຮົາມີຫລາຍພັນຄອບຄົວໄດ້ກໍ່ສ້າງວິດຖ່າຍໃນຄົວເຮືອນທີ່ມີລາຄາຖືກ, ສ່ວນຫຼາຍແມ່ນນຳໃຊ້ວັດສະດຸທີ່ມີຢູ່ໃນທ້ອງຖິ່ນ.

ໂຄງການຊ່ວຍເຫຼືອເດັກສະໜັບສະໜູນແມ່ຍິງໃນການສ້າງຕັ້ງ ແລະ ດຳເນີນລະ ບົບການລ້ຽງດູເດັກແບບໝູນວຽນຢູ່ໃນບ້ານ ແລະ ສ້າງໂຄງການພັດທະນາເດັກກ່ອນໄວຮຽນ ເພື່ອກຽມຄວາມພ້ອມໃຫ້ເດັກນ້ອຍກ່ອນເຂົ້າໂຮງຮຽນປະຖົມ.

ບົດຮຽນຈາກໂຄງການຊ່ວຍເຫຼືອເດັກ ໄດ້ຖືກພະນວກເຂົ້າໃນໂຄງການສົ່ງເສີມກຸ່ມຊາວກະສິກອນຢູ່ໃນແຂວງຄຳມ່ວນ.

**ໂຄງການຊ່ວຍເຫຼືອປະຊາຊົນໃຫ້ຈັດຕັ້ງກັນຂຶ້ນເປັນກຸ່ມດຳເນີນງານຂອງບ້ານ ເພື່ອສ້າງທັກສະ ແລະ ຄວາມຮູ້ທີ່ເຂົາເຈົ້າຕ້ອງການເພື່ອສ້າງການປ່ຽນແປງຮ່ວມກັນ**

**ໂດຍຄຳນຶງເຖິງຄວາມເປັນຢູ່ທີ່ດີຂອງເດັກ, ຊຸມຊົນອາດຈະຮ່ວມກັນສ້າງເດີ່ນຫຼິ້ນສຳລັບເດັກນ້ອຍ ແລະ ຈັດໃຫ້ພໍ່ຕູ່ແມ່ຕູ້ນຳພາໃນການດູແລເດັກນ້ອຍໃນລັກສະນະທີ່ເປັນສູນດູແລເດັກຂະໜາດນ້ອຍ.**

**ເດັກທຸກໆຄົນສົມຄວນໄດ້ຮັບສະຖານທີ່ທີ່ປອດໄພ ແລະ ເໝາະສົມໃນການຮຽນຮູ້ ແລະ ກຽດສັກສີຂອງສຸຂະອະນາໄມທີ່ເໝາະສົມ. ຊຸມຊົນຮ່ວມມືກັນເພື່ອປ່ຽນແປງສະພາບແວດລ້ອມການຮຽນຮູ້ ແລະ ຮັບປະກັນການເຂົ້າເຖິງສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມທີ່ຈຳເປັນເພື່ອຊ່ວຍໃຫ້ນັກຮຽນຮຽນຮູ້ ແລະ ຈະເລີນຮຸ່ງເຮືອງ.**

# Community-led Child Development Groups





Funded by the Child's Dream Foundation HPP Laos started piloting a Community-led Child Development Group at Ban Naphao, Khammouane Province in 2025.

The project supports the Government's policy of enrolling all 3-5 years old children in preschools nationwide.

The Humana People to People movement has implemented preschools in Southern Africa and Asia and has through the years developed a program that build on enhancing the government curriculum through innovative, holistic and community-led activities.

Main characteristics:

- Children from 3-5 years have the optimal possibilities for building up capacity and learning abilities and laying the foundation for their social and logic intelligence.
- Besides the traditional school subjects, the children learn about nature, animals, nutrition, hygiene and how to express themselves through arts and music.
- The preschool has its traditions and clear structure every month and every week, and each day has its routines
- The project leads the community to create a preschool building with a special nurturing and inspiring environment
- In each village a Parents' Committee is established. It is responsible for the preschool in cooperation with the teachers and HPP project staff.
- Every month the parents are receiving training in childcare, nutrition, hygiene and early childhood development

## Elements of the program:

**The school day is 4-5 hours long**, five days a week.

Four days a week the day has a fixed structure.

**One day a week is a special day**, reserved for activities like excursions, common actions, big events etc.

Besides the weekly structure the school year has a fixed structure with monthly headlines.

**Every month** the parents of the preschool children will be invited for a parents' afternoon to hear their children tell, sing and show examples of what were the main items in the program of the past month.

**1 Hour – Use your brain**

Learn about the world and its phenomena in a broad sense.

1 topic per month – 20 hours in each topic. The 12 topics of one year: The alphabet, Numbers and counting, Our Village, Worthy causes, Our Country, Southeast Asia, The World, Healthy and Well, Animals and Plants, The Weather, Agriculture, The Nature

**1 Hour – Use your hands**

General training through practical work and production on a small scale, getting to grips with reality, numbers, skills. Different headline for each day of the week: **Monday**: The Vegetable Garden; **Tuesday**: Cleaning and Decorating the Area Outdoors and Indoors; **Wednesday**: Learn a new skill with your hands; **Thursday**: The vegetable garden; **Friday**: Learn how to handle animals.

**1 Hour – Get experience and use your imagination**

Everything between heaven and earth.

This element will be different from day to day throughout the year. An inspiration plan with many ideas is set up, from which the concrete program can be made.

**1 Hour – Use your body**

Playing, competitions, Sports, dancing, singing, walking/exploring, games, drawing, using your motor skills. Headline for the days of the weeks: **Monday:** Sports; **Tuesday**: Sports; **Wednesday**: Sports and tournaments; **Thursday**: Organized play; **Friday**: Dancing

# ພາບລວມທາງດ້ານການເງິນ - HPP ລາວ







# ອົງການມະນຸດສະທຳເພື່ອຄົນສູ່ຄົນທົ່ວໂລກ



**49 ປະເທດ ໃນ 5 ທະວີບ**

**1,856 ໂຄງການພັດທະນາ**

**ເຂົ້າເຖິງປະຊາຊົນຫຼາຍກ່ວາ 17.5 ລ້ານຄົນ**

## ຄູ່ຮ່ວມງານໃນການພັດທະນາ

ອົງການມະນຸດສະທຳເພື່ອຄົນສູ່ຄົນມີຄວາມພາກພູມໃຈທີ່ໄດ້ເຮັດວຽກກັບຄູ່ຮ່ວມງານທີ່ຫຼາກຫຼາຍຂອງພວກເຮົາ ແລະ ຂອບໃຈສໍາລັບການສະໜັບສະໜູນທີ່ມອບໃຫ້ແກ່ໂຄງການພັດທະນາສັງຄົມຂອງພວກເຮົາ.
ການເປັນຄູ່ຮ່ວມງານແມ່ນສ່ວນຫນຶ່ງທີ່ສໍາຄັນຂອງສິ່ງທີ່ພວກເຮົາເຮັດ ແລະ ການນໍາສະເຫນີຄວາມສໍາພັນທີ່ເປັນສັນຍາລັກອັນສໍາຄັນທີ່ຊ່ວຍໂຄງການພວກເຮົາຈະເລີນຮຸ່ງເຮືອງ. ໃນຂະນະທີ່ຄູ່ຮ່ວມງານໃຫ້ການສະຫນອງທຶນທີ່ຈໍາເປັນສໍາລັບໂຄງການ, ພວກເຮົາກໍ່ປະກອບສ່ວນໃຫ້ຄວາມຮູ້ກ່ຽວກັບຄວາມຈໍາເປັນໃນທ່ອງຖິ່ນ ແລະ ມີສາຍພົວພັນທີ່ໃກ້ຊິດກັບຊຸມຊົນ.
ພວກເຮົາໃຫ້ແນວຄວາມຄິດ, ກໍາລັງແຮງ, ປະສົບການ ແລະ ຊັບພະຍາກອນຕ່າງໆເພື່ອເຮັດໃຫ້ສິ່ງຕ່າງໆເກີດຂຶ້ນ ດ້ວຍແນວຄິດແນວຄວາມຄິດ ແລະ ຂັ້ນຕອນດໍາເນີນໂຄງການທີ່ໄດ້ຜ່ານການທົດລອງ ແລະ ເຊື່ອຖືໄດ້ ແລະ ພ້ອມທີ່ຈະດໍາເນີນການ. ບັນດາຄູ່ຮ່ວມງານຂອງພວກເຮົາລວມມີເຈົ້າໜ້າທີ່ລັດຂັ້ນສູນກາງ ແລະ ທ້ອງຖິ່ນ, ມູນນິທິ, ພາກສ່ວນເອກະຊົນ, ຫຼາຍສໍານັກງານ ແລະ ອົງການຈັດຕັ້ງສາກົນຕ່າງໆ.
ພວກເຮົາຂໍສະແດງຄວາມຂອບໃຈມາຍັງຄູ່ຮ່ວມງານຂອງພວກເຮົາທັງຫມົດສໍາລັບຄວາມເອົາໃຈໃສ່ຊ່ວຍສະໜັບສະໜູນຢ່າງຕໍ່ເນື່ອງ ແລະ ເພື່ອເຮັດວຽກກັບປະຊາຊົນໃນຂັ້ນທ້ອງຖິ່ນ, ສືບຕໍ່ສ້າງການພັດທະນາທີ່ຈໍາເປັນເພື່ອການປ່ຽນແປງດ້ານທີ່ດີ ແລະ ຍືນຍົງ.

## ສະຫະພັນມະນຸດສະທໍາເພື່ອຄົນສູ່ຄົນ

ເປົ້າໝາຍລວມຂອງພວກເຮົາແມ່ນເພື່ອປົກປ້ອງໂລກ, ສ້າງຊຸມຊົນ ແລະ ຊ່ວຍເຫຼືອປະຊາຊົນໂດຍການເຊື່ອມໂຍງເຂົາເຈົ້າກັບຜູ້ອື່ນ, ເປີດເຜີຍທ່າແຮງບົ່ມຊ້ອນຂອງເຂົາເຈົ້າເພື່ອການປ່ຽນແປງ ແລະ ການດໍາເນີນງານໃນທາງບວກ. ສະຫະພັນສະໜັບສະໜູນສະມາຊິກໃນການສະໜອງບັນດາໂຄງການໃນຂັ້ນພື້ນຖານທີ່ອັນສໍາຄັນໃນທົ່ວທະວີບອາຟຣິກາ, ອາຊີ, ເອີຣົບ, ອາເມລິກາເໜືອ ແລະ ອາເມລິກາໃຕ້. ການສະຫນັບສະຫນູນນີ້ປະກອບມີການພັດທະນາໂຄງການ, ການຄຸ້ມຄອງໂຄງການ ແລະ ການດໍາເນີນງານ, ການສະຫນັບສະຫນູນການຄຸ້ມຄອງທາງດ້ານການເງິນ ແລະ ການຊ່ວຍ ເຫຼືອເພື່ອສົ່ງເສີມເປົ້າໝາຍລວມຂອງພວກເຮົາ ແລະ ໄດ້ຮັບອິດທິພົນໂດຍຜ່ານການພົວພັນ ແລະ ຄູ່ຮ່ວມງານທີ່ສໍາຄັນ.
ການເຄື່ອນໄຫວຂອງການເຄື່ອນໄຫວອງສະຫະພັນມະນຸດສະທໍາເພື່ອູຄົນສູ່ຄົນແມ່ນສອດຄ່ອງກັບວາລະຂອງ UN 2030.
ຮ່ວມກັບປະຊາຊົນໃນຊຸມຊົນ ແລະ ຄູ່ຮ່ວມງານຈໍານວນຫລາຍຂອງພວກເຮົາ, ພວກເຮົາສືບຕໍ່ຢືນຢູ່ກັບບັນດາປະເທດຍ້ອນວ່າພວກເຂົາພະຍາຍາມບັນລຸເປົ້າຫມາຍການພັດທະນາແບບຍືນຍົງ ແລະ ສົນທິສັນຍາປາຣີວ່າດ້ວຍໂລກຮ້ອນ ແລະ ການປ່ຽນແປງດິນຟ້າອາກາດ, ສ້າງຂະບວນການປ່ຽນແປງໃນທາງບວກທີ່ຍືນຍົງ.

**ອົງການ**
**ມະນຸດສະທຳເພື່ອຄົນສູ່ຄົນ**

Khouvieng Road, Hom 2, Ban Beungkhayong, Vientiane Capital, Lao PDR
: admin@hpp-laos.org : +856 20 225 43426 : hpp-laos.org : hpplaos